

# ຄວາມສາມັກຄີໃນພຣະຄຣິດ


“ພີ່ນ້ອງທັງຫລາຍເອີຍ, ໂດຍສິດອຳນາດຂອງພຣະນາມອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ ເຮົາຂໍຮ້ອງພວກເຈົ້າທຸກຄົນ ໃຫ້
ພວກເຈົ້າກ່າວຄວາມດຽວກັນ ແລະ ບໍ່ໃຫ້ຖືພັກຖືພວກ ແຕ່ຈົ່ງຮ່ວມເຂົ້າກັນເປັນນ້ຳໜຶ່ງໃຈດຽວ ແລະ ມີຈຸດປະສົງຢ່າງດຽວກັນ”
(1 ກຣທ 1:10)

ຫລັງຈາກທັກທາຍຊາວໂກຣິນໂທ ແລະ ຊື່ນຊົມພວກເຂົາໃນເລື່ອງການເຕີບໃຫຍ່ທາງດ້ານຈິດວິນຍານແລ້ວ, ອຈ. ໂປໂລ ກໍ່ເລີ່ມກ່າວເຖິງບັນຫາທໍາອິດທີ່ສົ່ງຜົນກະທົບຕໍ່ຄຣິດຕະຈັກ ນັ້ນກໍ່ຄື ການຂາດຄວາມສາມັກຄີ

ຕະຫລອດຈົດໝາຍຂອງເພິ່ນທີ່ສົ່ງເຖິງຊາວໂກຣິນໂທ ແລະ ຈົດໝາຍສະບັບອື່ນໆທີ່ເພິ່ນໄດ້ຂຽນ, ພວກເຮົາຈະເຫັນວ່າ ເພິ່ນໃຫ້ແນວທາງໃນການແກ້ໄຂບັນຫານີ້ ເຊິ່ງອາດຈະສົ່ງຜົນກະທົບຕໍ່ຄຣິດຕະຈັກໃນປະຈຸບັນ

ສິ່ງໜຶ່ງທີ່ຊັດເຈນກໍ່ຄື: ຄວາມສາມັກຄີໃນຄຣິດຕະຈັກ ບໍ່ສາມາດເກີດຂຶ້ນໄດ້ດ້ວຍຄວາມພະຍາຍາມຂອງມະນຸດເທົ່ານັ້ນ ພວກເຮົາຈະບັນລຸຄວາມສາມັກຄີນີ້ໄດ້ກໍ່ຕໍ່ເມື່ອພວກເຮົາມຸ່ງໄປທີ່ພຣະເຢຊູເທົ່ານັ້ນ





- ບັນຫາທີ່ກໍ່ໃຫ້ເກີດຄວາມແຕກແຍກ:
  - ການແຕກແຍກ ແລະ ການຜິດຖຽງກັນ
- ວິທີທີ່ຈະບັນລຸຄວາມສາມັກຄີ:
  - ມີຄວາມສາມັກຄີໃນພຣະຄຣິດ
  - ສະຕິປັນຍາ ແລະ ຄວາມເປັນຜູ້ໃຫຍ່
  - ການຮັບໃຊ້ ແລະ ການຖ່ອມໂຕ
  - ການເຄົາລົບຜູ້ນໍາ

# ບັນຫາທີ່ກໍ່ໃຫ້ເກີດຄວາມແຕກແຍກ

# ການແຕກແຍກ ແລະ ການຜິດຖຽງກັນ

"ພີ່ນ້ອງທັງຫລາຍເອີຍ, ໂດຍສິດອຳນາດຂອງພຣະນາມອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ ເຮົາຂໍຮ້ອງພວກເຈົ້າທຸກຄົນ ໃຫ້ພວກເຈົ້າກ່າວຄວາມດຽວກັນ ແລະ ບໍ່ໃຫ້ຖືພັກຖືພວກ ແຕ່ຈົ່ງຮ່ວມເຂົ້າກັນເປັນນ້ຳໜຶ່ງໃຈດຽວ ແລະ ມີຈຸດປະສົງຢ່າງດຽວກັນ" (1 ກຣທ 1:10)



ຄວາມແຕກແຍກທີ່ເກີດຂຶ້ນໃນຄຣິດຕະຈັກທີ່ເມືອງໂກຣິນໂທ ແມ່ນຫຍັງ (1 ກຣທ 1:12)?

ຜູ້ນຳຫລາຍຄົນເຄີຍມາເທດສະໜາຢູ່ທີ່ເມືອງໂກຣິນ ແລະ ຜູ້ເຊື່ອແຕ່ລະຄົນກໍມີຜູ້ເທດສະໜາທີ່ຕົນເອງມັກ (ອຈ ໂປໂລ, ອຈ ອະໂປໂລ, ອຈ ເປໂຕ...) ສິ່ງນີ້ ໄດ້ນຳໄປສູ່ຄວາມຂັດແຍ່ງໃນທ່າມກາງພວກເຂົາ (1 ກຣທ 1:11).



ພວກເຂົາບໍ່ໄດ້ຄຳນຶງວ່າ ພວກເຂົາທຸກຄົນກຳລັງເທດດສະໜາໃນເລື່ອງດຽວກັນ ສະນັ້ນ ພວກເຂົາຈຶ່ງມຸ່ງໄປທີ່ປະເດັນທີ່ບໍ່ກ່ຽວຂ້ອງ (1 ກຣທ 3:5-8).

ສິ່ງນີ້ຈຶ່ງຄ່ອຍໆສົ່ງຜົນກະທົບຕໍ່ຊີວິດຂອງຄຣິດຕະຈັກ (1 ກຣທ 3:3). ການຂາດຄວາມສາມັກຄີ ເຮັດໃຫ້ການຮ່ວມຮັບປະທານອາຫານຂອງພຣະເຈົ້າຜິດພ້ຽນໄປ (1 ກຣທ 11:33), ແລະ ພວກເຂົາຍັງເຖິງຂັ້ນຟ້ອງຮ້ອງເຊິ່ງກັນແລະກັນຢູ່ໃນສານ (1 ກຣທ 6:1).





# ວິທີຮັກສາຄວາມເປັນໜຶ່ງດຽວກັນ

# ຄວາມເປັນໜຶ່ງດຽວກັນໃນພຣະຄຣິດ

"ພຣະເຈົ້າສັດຊື່ ພຣະອົງໄດ້ຊົງເອີ້ນພວກເຈົ້າໃຫ້ສຳພັນສະໜິດກັບພຣະບຸດຂອງພຣະອົງ ຄືພຣະເຢຊູຄຣິດເຈົ້າ ພຣະອົງເຈົ້າຂອງພວກເຮົາ (1 ກຣທ 1:9)

"ພຣະຄຣິດຖືກແບ່ງແຍກອອກບໍ? ອຈ ໂປໂລຕຶງໄມ້ກາງແຂນແທນພວກເຮົາບໍ? ຫລື ວ່າ ທ່ານຮັບບັບຕິສະມາໃນພຣະນາມຂອງ ອຈ ໂປໂລ?" (1 ກຣທ 1:13). ດ້ວຍຄຳຖາມເຫລົ່ານີ້ ອຈ ໂປໂລ ໄດ້ໃຫ້ພວກເຂົາໄຕ່ຕອງ

ຄວາມເປັນເອກະພາບຈະເກີດຂຶ້ນໄດ້ ກໍ່ຕໍ່ເມື່ອພວກເຮົາມີພຣະເຢຊູເປັນພຣະເຈົ້າຂອງພວກເຮົາເທົ່ານັ້ນ, ຄວາມເປັນເອກະພາບບໍ່ໄດ້ເກີດຂຶ້ນຈາກການຍຶດຕິດກັບຄວາມຄິດ ຫລື ແນວຄິດຂອງພີ່ນ້ອງທາງຄວາມເຊື່ອ ຫລື ຈາກການລວມກຸ່ມກັນ

ແຕ່ຄວາມເປັນເອກະພາບໜຶ່ງດຽວໃນພຣະເຢຊູ ບໍ່ໄດ້ໝາຍຄວາມວ່າພວກເຮົາທຸກຄົນຄິດຄືກັນໃນທຸກເລື່ອງ ຫລືວ່າພວກເຮົາເຮັດແບບດຽວກັນໃນທຸກໆເລື່ອງ ເພາະຖ້າເປັນແນວນັ້ນ ທຸກຄົນກໍ່ຄືກັບຫຸ່ນຍົນ

ຄວາມແຕກຕ່າງເລັກນ້ອຍໃນຄວາມຄິດເຫັນ ເປັນຂອງປະທານທີ່ແຕກຕ່າງກັນຂອງແຕ່ລະຄົນ, ເມື່ອພວກເຮົານຳມາຮວມກັນໄວ້ໃນພຣະຄຣິດ ແທນທີ່ຈະກໍ່ໃຫ້ເກີດຄວາມແຕກແຍກ ແຕ່ມັນຈະກາຍມາເປັນຄວາມເປັນເອກະພາບໜຶ່ງດຽວ (1 ກຣທ 12:12-13, 25, 27).
ຄວາມເປັນໜຶ່ງໃນຄຣິດຕະຈັກ ຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອພວກເຮົາຕາຍຈາກຕົວຕົນ ແລະ ດຳເນີນຊີວິດ ເພື່ອພຣະເຢຊູເທົ່ານັ້ນ



# ສະຕິປັນຍາ ແລະ ຄວາມເປັນຜູ້ໃຫຍ່

"ພີ່ນ້ອງທັງຫລາຍເອີຍ, ຕາມຄວາມເປັນຈິງແລ້ວ ຝ່າຍເຮົາຈະເວົ້າກັບພວກເຈົ້າເໝືອນເວົ້າກັບຄົນທີ່ຢູ່ຝ່າຍພຣະວິນຍານກໍບໍ່ໄດ້, ເຮົາຈຳເປັນຕ້ອງເວົ້າກັບພວກເຈົ້າ ເໝືອນເວົ້າກັບຄົນທີ່ຢູ່ຝ່າຍມະນຸດ ທຳມະດາ, ເໝືອນດັ່ງພວກເຈົ້າເປັນເດັກນ້ອຍຝ່າຍຄວາມເຊື່ອໃນພຣະຄຣິດ." (1 ກຣທ 3:1)

ອຈ ໂປໂລ ເອີ້ນວ່າ ຄຣິດສຕຽນທີ່ຍັງເປັນເດັກນ້ອຍຢູ່ "ເດັກນ້ອຍໃນພຣະຄຣິດ," ຫລືວ່າ "ຝ່າຍໂລກ" (1 ກຣທ 3:1). ຄຣິສຕຽນປະເພດນີ້ໃຫ້ຄວາມສຳຄັນກັບໂລກຫລາຍກວ່າພຣະເຢຊູ

ຖ້າໃຫ້ຄວາມສຳຄັນກັບຜູ້ນຳບາງຄົນຫລາຍເກີນໄປ ຈົນລະເລີຍຜູ້ນຳຄົນອື່ນໆ ກຸ່ມຕ່າງໆຈຶ່ງເກີດການແບ່ງແຍກຄຣິດຕະຈັກ. ນີ້ແມ່ນຜົນມາຈາກຄວາມບໍ່ເຕີບໃຫຍ່, ດັ່ງນັ້ນ ອຈ ໂປໂລ ຈຶ່ງຊວນໃຫ້ພວກເຮົາເຕີບໂຕເປັນຜູ້ໃຫຍ່ໃນພຣະຄຣິດ(1 ກຣທ 2:6).

## ຍັງບໍ່ເຕີບໃຫຍ່



ພວກເຂົາຄືກັບເດັກນ້ອຍ

(1 ກຣທ 3:1)



ພວກເຂົາດື່ມນ້ຳນົມ

(1 ກຣທ 3:2)



ພວກເຂົາຢູ່ຝ່າຍມະນຸດ

(1 ກຣທ 3:3)



ພວກເຂົາຖືກຈູງໂດຍຄວາມຄິດເຫັນຜູ້ອື່ນ (1 ກຣທ 3:4)

## ເຕີບໃຫຍ່ແລ້ວ



ພວກເຂົາເປັນຜູ້ໃຫຍ່ແລ້ວ

(1 ກຣທ 14:20)



ພວກເຂົາກິນອາຫານແຂງ

(ຮຮ 5:14)



ພວກເຂົາຢູ່ຝ່າຍພຣະວິນຍານ

(1 ກຣທ 2:13)



ພວກເຂົາເຂົ້າໃຈເຖິງໂດຍພຣະວິນຍານຊົງນຳ (1 ກຣທ 2:14)

# ການຮັບໃຊ້ ແລະ ການອ່ອນນ້ອມຖ່ອມໂຕ

"ໃຫ້ທຸກຄົນຖືວ່າ ພວກເຮົາເປັນຜູ້ຮັບໃຊ້ຂອງພຣະຄຣິດ ທັງເປັນຜູ້ປ້ອງກັນຮັກສາຄວາມຈິງອັນເລິກລັບຂອງພຣະເຈົ້າ" (1 ກຣທ 4:1)

ເຊັ່ນດຽວກັບໃນປະຈຸບັນ, ໃນສະຕະວັດທຳອິດ ຜູ້ຄົນກໍ່ມີການແຕກແຍກກັນດ້ວຍຄວາມເຊື່ອທາງການເມືອງ, ປັດສະຍາ, ສາສະໜາ ແລະ ຄວາມເຊື່ອອື່ນໆ. ພວກເຮົາຈະປ້ອງກັນບໍ່ໃຫ້ເກີດຄວາມຄິດແບບນີ້ ທີ່ແຊກຊຶມເຂົ້າໄປໃນຄຣິດຕະຈັກ ແລະ ກໍ່ໃຫ້ເກີດຄວາມແຕກແຍກໄດ້ແນວໃດ?







ທັດສະນະຄະຕິຂອງຜູ້ນຳມີບົດບາດທີ່ສຳຄັນ, ຜູ້ນຳຄຣິດຕະຈັກຕ້ອງເຂົ້າໃຈເຖິງບົດບາດຂອງຕົນເອງໃນຖານະຜູ້ເບິ່ງແຍງດູແລ. ພວກເຂົາບໍ່ແມ່ນເຈົ້າຂອງຄຣິດຕະຈັກ ແຕ່ເປັນພຽງຜູ້ບໍລິຫານຈັດການ ເພື່ອພຣະເຢຊູ



ຜູ້ນຳຂອງຄຣິດຕະຈັກ ແມ່ນພຣະເຢຊູ, ສ່ວນຄົນອື່ນໆ ໃນຖານະຜູ້ບໍຣິຫານວຽກງານ ແມ່ນເປັນ "ຜູ້ຮັບໃຊ້ຂອງພຣະຄຣິດ" (1 ກຣທ 4:1).

ຜູ້ຮັບໃຊ້ທີ່ບໍລິຫານວຽກງານຕ້ອງປະພຶດຕົນເອງຄືກັບພຣະເຈົ້າຂອງຕົນເອງ, ໂດຍເຕັມໃຈທີ່ຈະຖ່ອມໂຕເພື່ອຮັບໃຊ້ຄົນອື່ນສະເໝີ (ຟລປ 2:3-8).



ຄວາມສາມັກຄີໃນຄຣິດຕະຈັກຈະເປັນແນວໃດ ຖ້າວ່າທຸກຄົນ ລວມເຖິງສະມາຊິກປະຕິບັດແບບນີ້?

# ການເຄົາລົບຜູ້ນຳ

“ຜູ້ຮັບຜິດຊອບປ້ອງກັນຮັກສາ ຕ້ອງເປັນຄົນສັດຊື່ (1 ກຣທ 4:2)



ການມີຢູ່ຂອງຄວາມຂັດແຍ່ງລະຫວ່າງກຸ່ມຕ່າງໆ ຮອບໂຕຜູ້ນຳ ບໍ່ໄດ້ໝາຍຄວາມວ່າ ພວກເຮົາຄວນປະຕິເສດພວກເຂົາ, ກົງກັນຂ້າມ ອຈ ໂປໂລ ສະໜັບສະໜູນໃຫ້ປົກປ້ອງພວກເຂົາ ແລະ ວຽກງານຂອງພວກເຂົາຢູ່ທີ່ເມືອງໂກຣິນໂທ (1 ກຣທ 3:5-6; 4:6; 16:12).



ເມື່ອຜູ້ນຳເຮັດວຽກງານດ້ວຍຄວາມຊື່ສັດ (1 ກຣທ 4:2; 1 ຕມທ 5:17). ເຖິງວ່າພວກເຂົາຈະບໍ່ໄດ້ຮັບກຽດຕິຍົດນັ້ນກໍ່ຕາມ, ພວກເຂົາກໍ່ຍັງຊື່ສັດ ເພາະພວກເຂົາຮູ້ວ່າ ພຣະເຈົ້າເປັນຄົນທີ່ຕັດສິນພວກເຂົາ ບໍ່ແມ່ນມະນຸດ (1 ກຣທ 4:3-4).



ທ່ານ.ຟະແຣ້ງ Frank ແລະ ທ່ານ. ວໍເຕີ ບອນ Walter Bond ພວກເຂົາແມ່ນມິດເຊັ່ນນາຣາສອງຄົນທຳອິດໃນປະເທດສະເປນ. Walter ເສຍຊີວິດທີ່ເມືອງ Jaen ໃນປີ 1914.

ຜູ້ນຳຄຣິດສຕຽນຄວນດຳເນີນຕາມຮອຍພຣະເຢຊູໂດຍເຕັມໃຈທີ່ຈະທົນທຸກເພື່ອພີ່ນ້ອງສະມາຊິກ ແລະ ຖ້າຈຳເປັນກໍ່ຍອມຕາຍເພື່ອການຮັບໃຊ້ໄດ້, ໃນກໍລະນີທີ່ສຸກເສີນ (1 ກຣທ 4:11-13; 2 ກຣທ 11:23-28).



ທັງຜູ້ນຳ ແລະ ສະມາຊິກ ບໍ່ໄດ້ຖືກຮຽກເອີ້ນໃຫ້ຕໍ່ສູ້ ຫລືໂຕ້ຖຽງກັນ ແຕ່ໃຫ້ລວມກັບສັນລະເສີນພຣະເຢຊູ ແລະ ປະກາດຂ່າວປະເສີດເລື່ອງໄມ້ກາງແຂນ

“ບໍ່ມີສິ່ງໃດທີ່ຈະເຮັດໃຫ້ຄວາມສາມັກຄີທີ່ສົມບູນແບບເກີດຂຶ້ນ
ໃນຄຣິດຕະຈັກໄດ້ ນອກຈາກຈິດວິນຍານແຫ່ງຄວາມອົດທົນ, ອົດ
ກັ້ນ ດັ່ງທີ່ພຣະຄຣິດໄດ້ມີ, ຊາຕານສາມາດຫວ່ານເມັດພືດແຫ່ງ
ຄວາມແຕກແຍກໄດ້ ແຕ່ພຣະຄຣິດເທົ່ານັ້ນທີ່ສາມາດເຮັດໃຫ້ຄວາມ
ຂັດແຍ່ງສາມາດມາປອງດອງກັນໄດ້.... ພວກເຮົາທັງຫລາຍໃນ
ຖານະຜູ້ຮັບໃຊ້ຄຣິດຕະຈັກ ຄວນຮັກພຣະເຈົ້າຢ່າງສຸດກຳລັງ ແລະ
ຮັກເພື່ອນບ້ານຄືກັນກັບຮັກໂຕເອງ ແລະ ກໍຈະບໍ່ມີຄວາມ
ພະຍາຍາມໃດໆ ທີ່ຈະທຳລາຍຄວາມສາມັກຄີ, ແລະ ຈະບໍ່ມີໃຜ
ກ່າວຮ້າຍເພື່ອນບ້ານຂອງຕົນເອງ. ສະມາຊິກຂອງຄຣິດຕະຈັກຈະ
ທະນຸທະໜອນຄວາມຮັກ ແລະ ຄວາມສາມັກຄຕ ແລະ ເປັນຄືກັບ
ຄອບຄົວໃຫຍ່ຄອບຄົວດຽວກັນ ແລ້ວ ພວກເຮົາຈະນຳຫລັກຖານໄປ
ບອກໂລກວ່າ ພຣະເຈົ້າໄດ້ຊົງພຣະບຸດຂອງພຣະອົງລົງມາທີ່ໂລກນີ້”

**EGW (Reflecting Christ July 5)**